CONSTITUTION

OF THE LAO-AMERICAN ASSOCIATION

adopted by the Annual General Meeting of February 7, 1970

TO REPLACE THE STATUTES OF DECEMBER 1963.

---

This Constitution was approved by the Ambassador of the United States of America on February 10, 1970, and by the Minister of the Interior of the Kingdom of Laos on February 20, 1970, and thereupon entered into effect.

---

Article I. <u>Name of the Association</u>

The Association shall be known in English as the Lao-American Association (LAA) and in Lao as the Samakhom-Lao-American ( ສະມາຄົມລາວ-ອະເມຣິກັນ (ສລອ)).

Article II. <u>Purpose of the Association</u>

The Lao-American Association is an educational and cultural organization devoted to strengthening the bonds of understanding between the peoples of the Kingdom of Laos and of the United States. It is non-profit, non-political and non-sectarian. Its annual program of activities may include the following:

1. Educational programs, especially those bearing on the languages, cultures, history, institutions and ideals of Laos and the United States.
2. Organization of lectures, exhibits, concerts, broadcasts, screenings, and other cultural and artistic activities.
3. Publication of bulletins, brochures, books, and similar materials.
4. Sponsorship of activities of other organizations having similar aims.

Article III. <u>Location</u>

The principal center of the Lao-American Association shall be in Vientiane with branches in other parts of the Kingdom when deemed fiscally and culturally justifiable and practicable. Branch associations shall function under the authority of this constitution and the Board of Directors.

Article IV. <u>Membership</u>

1. <u>Regular Membership</u> in the Association is open to all citizens of Laos and of the United States 18 years of age and over, upon payment of the current dues, who share the aims of the Association and who wish to participate in its activities. Voting rights are reserved to Regular Members.

ຊຸມສະມັດຊາໃຫ່ຍປະຈຳປີ ຈຳເປັນ ແລະຈະຕ້ອງໃຫ້ມີຂຶ້ນໄວທີ່ສຸດເທົ່າທີ່ຈະໄວໄດ້ຫຼັງຈາກປີໃໝ່. ການຮຽກປະຊຸມພິເສດອາດຈະມີຂຶ້ນໄດ້ທຸກໂອກາດ ເມື່ອໃດປະທານຫາກເຫັນວ່າຈຳເປັນ ແລະເມື່ອໃດຫາກມີຄຳຮຽກຮ້ອງເປັນລາຍລັກອັກສອນຈາກສະມາຊິກສາມັນເຖິງ ໒໕ ເປີເຊັນ.

໒. ອົງປະຊຸມຂອງຄນະກັມມະການບໍຣິຫານຈະຕ້ອງປະກອບຂຶ້ນດ້ວຍ ຢ່າງນ້ອຍເຄິ່ງນຶ່ງຂອງຄນະກັມມະການທັງໝົດ, ໃນຈຳນວນນັ້ນຈະຕ້ອງມີເຈົ້າໜ້າທີ່ສອງຄົນ ແລະສອງຄົນຈະຕ້ອງຖືສັນຊາດຕ່າງກັນກັບຜູ້ທີ່ເຂົ້າຮ່ວມ.

ອົງປະຊຸມຂອງກອງປະຊຸມສະມັດຊາໃຫ່ຍປະຈຳປີ ຈະຖືເອົາຕາມຈຳນວນສະມາຊິກສາມັນທີ່ເຂົ້າຮ່ວມນັ້ນໂລດ. ນະທີ່ກອງປະຊຸມນີ້ ສະມາຊິກຂອງຄນະກັມມະການຊຸດໃໝ່ ຈະສເນີຕົວຕໍ່ສະມາຊິກທັງໝົດ ແລະລາຍງານປະຈຳປີຈະໄດ້ສເນີຕໍ່ກອງປະຊຸມເໝືອນກັນ.

ອົງປະຊຸມຂອງກອງປະຊຸມພິເສດ ຈະຖືເອົາຕາມຈຳນວນສະມາຊິກສາມັນທີ່ເຂົ້າຮ່ວມ.

ມາດຕາ ໙. ຂໍ້ກ່ຽວການແກ້ໄຂເພີ້ມເຕີມ

ທັມມະນູນສະບັບນີ້ອາດແກ້ໄຂເພີ້ມເຕີມໄດ້ໂດຍ:

໑. ສົ່ງຮ່າງຍັດຕິໄປໃຫ້ສະມາຊິກສາມັນທຸກຄົນໂດຍຂັດໃບບອກວ່າ ຮັບຮອງເອົາ ຫຼື ຂັດຄ້ານນັ້ນໄປພ້ອມ, ໂດຍກຳນົດເວລາໃຫ້ພິຈາຣະນານຶ່ງເດືອນ - ຖ້າຫາກມີສຽງສນັບສນູນເຖິງສອງສ່ວນສາມ (໒/໓) ຈາກສະມາຊິກທີ່ລົງຄະແນນສຽງນັ້ນແລ້ວ ກໍເປັນອັນວ່າໃຊ້ໄດ້; ຫຼື

໒. ຫຼັງຈາກໄດ້ສົ່ງຮ່າງຍັດຕິນັ້ນໄປແລ້ວນຶ່ງເດືອນ ຈຶ່ງຮຽກໃຫ້ມີການປະຊຸມພິເສດຂຶ້ນ ເພື່ອໃຫ້ສະມາຊິກສາມັນມາລົງຄະແນນສຽງ. ຖ້າໄດ້ຮັບສຽງສນັບສນູນເຖິງສອງສ່ວນສາມຈາກສະມາຊິກຜູ້ເຂົ້າຮ່ວມນັ້ນແລ້ວ ກໍຖືວ່າ ຮ່າງຍັດຕິນັ້ນຖືກຮັບຮອງເອົາ.

ຮ່າງຍັດຕິຂອງທັມມະນູນນີ້ຈະຕ້ອງໄດ້ຮັບຄວາມຮັບຮອງຈາກທ່ານຣັຖມົນຕຣີກະຊວງມະຫາດໄທ ຫຼື ຜູ້ຕາງໜ້າຂອງທ່ານ ແລະພະນະທ່ານເອກອັຄຣາຊທູດອະເມຣິກັນ ຫຼື ຜູ້ຕາງໜ້າຂອງທ່ານ.

ມາດຕາ ໑໐. ການຍຸບສະມາຄົມ

ສະມາຄົມຈະຍຸບໄດ້ ຫາກເມື່ອໃດຣັຖບານ ແຫ່ງ ພຣະຣາຊອານາຈັກລາວ ເຫັນວ່າການດຳເນີນງານຂອງສະມາຄົມຫາກຂັດແຍ້ງກັບນະໂຍບາຍຂອງຣັຖບານ ຫຼື ໃນກອງປະຊຸມສະມັດຊາໃຫ່ຍນັ້ນຫາກໄດ້ຮັບສຽງສນັບສນູນເຫັນດີໃຫ້ຍຸບ ຢ່າງນ້ອຍສອງສ່ວນສາມ (໒/໓) ຂອງຈຳນວນສະມາຊິກທີ່ເຂົ້າຮ່ວມ ຊຶ່ງມີຢ່າງນ້ອຍສາມສ່ວນສີ່ (໓/໔) ຂອງສະມາຊິກທັງໝົດ.

ລາຍງານການຍຸບຕົວຂອງສະມາຄົມຈະຕ້ອງຍື່ນໄປຍັງອາດຍາສິດຜູ້ກ່ຽວຂ້ອງເຊັ່ນ: ພະນະທ່ານເອກອັຄຣາຊທູດອະເມຣິກັນ ແລະ ທ່ານຣັຖມົນຕຣີກະຊວງມະຫາດໄທ ແຫ່ງ ພຣະຣາຊອານາຈັກລາວ.

ສິນບັດຂອງສະມາຄົມຈະຍົກໃຫ້ໃຜ ຫຼື ເຮັດແນວໃດນັ້ນ ກໍສຸດແລ້ວແຕ່ຣັຖມົນຕຣີກະຊວງມະຫາດໄທ ແຫ່ງ ພຣະຣາຊອານາຈັກລາວ ແລະ ພະນະທ່ານເອກອັຄຣາຊທູດອະເມຣິກັນ ຫຼັງຈາກໄດ້ປຶກສາກັບຄນະກັມມະການບໍຣິຫານແລ້ວ.

2. Associate Membership is open to all those 18 years of age and over who do not hold Lao or American citizenship but in every other way conform with the requirements for regular membership. Associate Members shall pay the same dues as Regular Members and be eligible for participation in all activities of the Association save that of holding office and voting.

3. Student Membership is open to all students under 18 years of age registered in classes of the Lao-American Association for so long as they continue in their courses, and to former students who express a continued interest in the Association and are not eligible for Regular or Associate Membership. Student Members may not vote or hold office but shall have other privileges of membership determined by the Board. Students enrolled in classes shall pay no dues. Former students shall pay dues to be determined by the Board of Directors.

4. All memberships are subject to the approval of the Board of Directors.

Article V. Board of Directors, Election and Duties

1. The Board of Directors shall be the governing body of the Association, elected from the regular membership or from persons willing and eligible to become members, and consisting of an equal number of Lao (6) and American (6) citizens. An additional two members of each nationality, to be designated first and second alternates, shall be elected to serve in case of resignation. At the first meeting following its election the Board shall choose from its membership the following officers:

President
Vice-President
Secretary
Treasurer

2. Elections: The Board of Directors shall be elected by secret, mailed ballot, prior to the Annual Meeting of the General Membership, from a slate of 12 Lao and 12 American candidates, to serve for a term of 12 months. An affirmative response by 25% of the membership shall constitute election. The candidates for the Board shall be selected in advance by circulating to all regular members a list of those eligible for office and requesting that they choose candidates from among those listed. In addition, the President shall appoint a committee of not more than three persons to supervise this poll of the membership and to present other suitable names when necessary.

The election of officers at the first meeting of the new Board will be by secret ballot with each member stating his choice opposite the office listed on the ballot. In case of a tie, a new vote will be taken. Until such time as the newly elected Board has convened and selected its officers, the outgoing officers shall continue to perform the duties of their respective offices.

ນາຍຄັງ   ຈະເປັນຜູ້ຮັບຜິດຊອບໃນການສແດງຄວາມຮ້ອງຂໍຂອງຄະນະກັມມະການ ລາຍງານດ້ານການເງິນຂອງສະມາຄົມ ແລະສເນີບັນຊີລາຍໄດ້ ແລະລາຍຈ່າຍຕໍ່ກອງປະຊຸມສະມັດຊາໃຫຍ່ປະຈຳປີ. ນອກຈາກນັ້ນຍັງຈະຕ້ອງດູແລການຮັກສາບັນທຶກລາຍໄດ້ ແລະລາຍຈ່າຍນຳອີກດ້ວຍ ແລະຮ່ວມຮັບຜິດຊອບກັບທ່ານປະທານໃນການດູແລກິຈການດ້ານການເງິນຂອງສະມາຄົມ.

ມາດຕາ ໖. <u>ການປົກຄອງ</u>

ການປົກຄອງທົ່ວໄປຂອງສະມາຄົມໄດ້ມອບໝາຍໃຫ້ແກ່ຜູ້ອຳນວຍການສະມາຄົມລາວ-ອະເມຣິກັນເອງ ແລະຄະນະເຈົ້າພະນັກງານຂອງທ່ານເອງ. ວຽກອັນໃດຊຶ່ງບໍ່ກ່ຽວເປັນບັນຫາຍາກ, ແມ່ນມອບໃຫ້ຜູ້ອຳນວຍການ ແລະຄະນະພະນັກງານຂອງທ່ານດຳເນີນໄປທັງໝົດ. ຄະນະກັມມະການບໍຣິຫານມີສິດຈະສອບຖາມຜູ້ອຳນວຍການໄດ້ທຸກເວລາກ່ຽວກັບວຽກການພາຍໃນການປົກຄອງ, ແລະມີສິດທີ່ຈະຍື່ນມືເຂົ້າຈັດການເມື່ອມັນກ່ຽວການຮັບຜິດຊອບຂອງຄະນະກັມມະການ. ຜູ້ອຳນວຍການສະມາຄົມໄດ້ຖືກຮັບມອບໝາຍຈາກຄະນະກັມມະການບໍຣິຫານໃຫ້ແຈ້ງລາຍງານເຖິງໂຄງການກິຈກັມຕ່າງໆ ຊຶ່ງທ່ານເຫັນສົມຄວນນັ້ນໃຫ້ແກ່ປະທານ ຫຼື ຮອງປະທານ (ຫຼືຜູ້ຕາງໜ້າ) ຊາບນຳສເນີ.

ເຈົ້າພະນັກງານຢູ່ຫ້ອງການທຸກໆຄົນ ຮ່ວມທັງຜູ້ອຳນວຍການນຳດ້ວຍ ຈະຕ້ອງປະຕິບັດງານພາຍໃນຂອບເຂດຄວາມເຫັນຊອບຂອງຄະນະກັມມະການບໍຣິຫານ.

ມາດຕາ ໗. <u>ການດຳເນີນງານດ້ານການເງິນ</u>

ສະມາຄົມລາວ-ອະເມຣິກັນ (ສລອ) ຈະດຳເນີນງານໄປໃນລັກສະນະສະມາຄົມທີ່ບໍ່ຫວັງຜົນກຳໄລ ແລະຈະບຳຣຸງຕົນເອງໂດຍລາຍໄດ້ດັ່ງນີ້:

໑. ຄ່າທຳນຽມສະມາຊິກ
໒. ລາຍໄດ້ຈາກກິຈກັມຕ່າງໆ
໓. ຄ່າຣຳຣຽນ
໔. ເງິນທຶນຊ່ວຍເຫຼືອພິເສດ
໕. ເງິນບໍຣິຈາກຕ່າງໆ

ເງິນທຶນ ແລະເງິນບໍຣິຈາກຕ່າງໆຈະຖືກຮັບເອົາ ຫຼືບໍ່ນັ້ນ ຂຶ້ນຢູ່ກັບຄວາມເຫັນຊອບຂອງຄະນະກັມມະການເອງ.

ການຈະຊອກຫາສົມບັດທຸກຢ່າງມາໃຊ້, ການຈະເກັບຮັກສາສົມບັດນັ້ນໄວ້ ຫຼືການຈະອະນຸມັດໃຫ້ໃຊ້ໃນການຈະບັນລຸຈຸດມຸ່ງໝາຍຂອງສະມາຄົມນີ້ ແມ່ນວຽກຂອງຄະນະກັມມະການທັງສິ້ນ. ສະມາຊິກໃນຄະນະກັມມະການບໍຣິຫານ ທຸກຄົນຈະຮັບໃຊ້ໃນໜ້າທີ່ໂດຍບໍ່ມີສິນຈ້າງລາງວັນ ແລະຜູ້ໃດຜູ້ນຶ່ງຈະອ້າງສິດສ່ວນຕົວມາຮັບຜິດຊອບກິຈກັມດ້ານການເງິນຂອງສະມາຄົມນັ້ນບໍ່ໄດ້.

ຜູ້ອຳນວຍການຂອງສະມາຄົມຈະຕ້ອງນຳເອົາງົບປະມານທີ່ກະໄວ້ໃນປີຕໍ່ໄປນັ້ນ ມາສເນີຂໍຄວາມຮັບຮອງຈາກຄະນະກັມມະການບໍຣິຫານຊຸດໃໝ່.

ມາດຕາ ໘. <u>ການປະຊຸມ, ອົງປະຊຸມ ແລະ ວິທີຈັດການປະຊຸມ</u>

໑. ຄະນະກັມມະການບໍຣິຫານຈະຕ້ອງຈັດໃຫ້ມີການປະຊຸມກັນຢ່າງນ້ອຍເດືອນລະເທື່ອ; ການປະ

3. Duties of Board of Directors:

The Board of Directors shall:

a) Be responsible for the implementation of the present constitution.
b) Be the constituted authority of the Association and present in its name the annual report of its activities.
c) Approve all activities of the Association including recipients of any scholarships that may become available.
d) Approve activities of the various branches and the apportionment and use of available funds allotted to them.
e) Determine amounts of dues and fees.

4. Duties of the Officers:

The President shall preside over all meetings of the general membership and of the Board of Directors. He shall be the official representative of the Association and shall be responsible for the execution of the provisions set forth in the Constitution and for implementing the decisions of the Board of Directors and of those of the membership meeting in general assembly. On voice or roll call votes at meetings of the Board he shall vote only to make or break a tie; in all other ballots he shall vote as a regular member. He may call special meetings of the Board and of the general membership at any time that he feels it is necessary. He shall share with the Treasurer the responsibility for supervising all financial transactions of the Association. He shall also present a President's report at the Annual Meeting of the General Membership.

The Vice-President shall assist the President in all his duties, replace him in case of absence and undertake any special commissions assigned to him by the President.

The Secretary shall record the minutes of the meeting of the Board of Directors and of the general membership meetings and be responsible for the supervision of the staff in filing correspondence, preserving records, issuing membership cards and notifying the membership of meetings.

The Treasurer shall be responsible for submitting, at the request of the Board, reports of the financial status of the organization and presenting a report to the General Membership at the Annual Meeting. He shall also supervise the keeping of financial records, and share with the President the responsibility for supervising all financial transactions of the Association.

Article VI. Administration

The general administration of the Association is delegated to the Director of the Lao-American Association and to his staff where matters of policy are not concerned. The right is reserved to the Board to inquire into the administrative

ມາຊິກເຖິງ ໔໕ ປີເຈັນ. ຜູ້ສະໝັກຮັບເລືອກຕັ້ງເຂົ້າເປັນຄະນະກັມມະການບໍລິຫານ ຈະຕ້ອງຖືກຄັດເລືອກລວງ ມາຈາກບັນຊີລາຍຊື່ຜູ້ທີ່ມີສິດຮັບໃຊ້ໃນຄະນະກັມມະການທີ່ໄດ້ສົ່ງໄປໃຫ້ສະມາຊິກສາມັນທຸກຄົນ ໂດຍຂໍຮ້ອງໃຫ້ຂະເຈົ້າສເນີເອົາຜູ້ທີ່ຂະເຈົ້າມັກ. ນອກຈາກນັ້ນ ປະທານຈະຕັ້ງກັມມະການຄະນະນຶ່ງຂຶ້ນບໍ່ໃຫ້ຫຼາຍກວ່າສາມຄົນ ເພື່ອຄວບຄຸມການເລືອກຕັ້ງຂອງສະມາຊິກ ແລະເພື່ອສເນີລາຍຊື່ຜູ້ທີ່ເໝາະສົມອີກ ຖ້າຫາກຈຳເປັນ.

ການເລືອກຕັ້ງເຈົ້າໜ້າທີ່ນະທີ່ປະຊຸມຄັ້ງທຳອິດຂອງຄະນະກັມມະການຊຸດໃໝ່ ກໍ່ຈະເຮັດເປັນທາງລັບເຊັ່ນດຽວກັນ. ກັມມະການທຸກຄົນຈະຕ້ອງຂຽນຊື່ຜູ້ທີ່ຕົນມັກ ລົງຕົງກັນຂ້າມກັບຕຳແໜ່ງທີ່ຕົນເຫັນວ່າຜູ້ນັ້ນເໝາະສົມ. ຖ້າຫາກວ່າມີສຽງທ່ຽມກັນ ກໍ່ຈະຕ້ອງໄດ້ລົງຄະແນນສຽງໃໝ່ອີກ. ຄະນະກັມມະການຊຸດເກົ່າ ຈະຕ້ອງດຳເນີນງານໄປຊົ່ວຄາວກ່ອນ ຈົນກວ່າຄະນະກັມມະການຊຸດໃໝ່ຈະຕຽມພ້ອມ ແລະມີເຈົ້າໜ້າທີ່ຮຽບຮ້ອຍເສັຽກ່ອນ.

## ໓. ໜ້າທີ່ຂອງຄະນະກັມມະການບໍລິຫານງານ

ຄະນະກັມມະການບໍລິຫານງານຈະຕ້ອງ:

ກ.) ຮັບຜິດຊອບໃນການປະຕິບັດໜ້າທີ່ຕາມທັມມະນູນສະບັບນີ້.
ຂ.) ເປັນຜູ້ປະກອບອຳນາດຂອງສະມາຄົມ ແລະສເນີລາຍງານກ່ຽວກັບກິຈກັມປະຈຳປີໃນນາມຂອງຄະນະກັມມະການ.
ຄ.) ພິຈາຣະນາຮັບຮອງເອົາກິຈກັມທຸກຢ່າງຂອງສະມາຄົມ ຮ່ວມທັງທຶນການສຶກສາທີ່ອາດຈະໄດ້ຮັບ.
ງ.) ພິຈາຣະນາຮັບຮອງເອົາກິຈກັມຕ່າງໆຂອງແຕ່ລະສາຂາ ຮ່ວມທັງສ່ວນແບ່ງ ແລະງົບປະມານທີ່ກະໄວ້ໃຫ້.
ຈ.) ວາງອັດຕຣາຄ່າທັມນຽມ ແລະຄ່າຮຽນ.

## ໔. ໜ້າທີ່ການຂອງເຈົ້າໜ້າທີ່ຂອງຄະນະກັມມະການ

ປະທານ ຈະນັ່ງເປັນປະທານຂອງກອງປະຊຸມຂອງສະມາຊິກ ແລະກອງປະຊຸມຂອງຄະນະກັມມະການບໍລິຫານງານທຸກໆເທື່ອ. ປະທານຈະເປັນຜູ້ຕາງໜ້າຂອງສະມາຄົມ ແລະຈະເປັນຜູ້ຮັບຜິດຊອບໃນການບໍລິຫານງານຕາມເງື່ອນໄຂທີ່ບັດຍັດໄວ້ໃນທັມມະນູນ ແລະຈະເປັນຜູ້ປະຕິບັດຕາມຄວາມເຫັນຂອງຄະນະກັມມະການບໍລິຫານ ແລະຂອງສະມາຊິກໃນສມັຍປະຊຸມສະມັດຊາໃຫຍ່. ເມື່ອມີການຊີ້ມື ຫຼື ອອກສຽງລົງຄວາມເຫັນໃນທີ່ປະຊຸມຂອງຄະນະກັມມະການ, ປະທານຈະອອກສຽງໄດ້ ກໍ່ຕໍ່ເມື່ອສອງຂ້າງມີຈຳນວນສຽງເທົ່າກັນ. ສຳລັບການລົງຄະແນນສຽງຢ່າງອື່ນ ປະທານຈະອອກສຽງເລືອກຕັ້ງດັ່ງດຽວກັນກັບສະມາຊິກສາມັນ. ປະທານອາດຈະຮຽກປະຊຸມພິເສດຂອງຄະນະກັມມະການ ແລະຂອງສະມາຊິກທົ່ວໄປຍາມໃດກໍໄດ້ ສຸດແລ້ວແຕ່ຈະເຫັນວ່າຈຳເປັນ. ປະທານຈະຮ່ວມຮັບຜິດຊອບກັບນາຍຄັງ ໃນການດູແລເບິ່ງແຍງກິຈການທາງດ້ານການເງິນຂອງສະມາຄົມ.

ຮອງປະທານ ຈະເປັນຜູ້ຊ່ວຍເຫຼືອປະທານໃນທຸກໆກໍຣະນີ ທຳໜ້າທີ່ແທນເມື່ອປະທານບໍ່ຢູ່ ແລະທຳໜ້າທີ່ພິເສດທີ່ປະທານມອບໝາຍໃຫ້.

ເລຂານຸການ ຈະເປັນຜູ້ບັນທຶກລາຍງານການປະຊຸມຂອງຄະນະກັມມະການ ແລະຂອງກອງປະຊຸມສະມາຊິກທົ່ວໄປ ແລະຈະເປັນຜູ້ຮັບຜິດຊອບໃນການແນະນຳຄະນະປະຕິບັດງານໃນດ້ານການຕິດຕໍ່, ຮັກສາບັນທຶກຕ່າງໆ ເປັນຜູ້ອອກບັດສະມາຊິກ ແລະຂ່າວການປະຊຸມໃຫ້ສະມາຊິກຊາບ.

activities at any time and to take appropriate action where the Board's responsibilities are concerned. The Director of the Association is charged by the Board to inform the President or the Vice-President (or their designees) of any planned activities which, in his judgment, require Board approval.

All members of the administrative staff, including the Director, serve subject to the approval of the Board.

Article VII. <u>Fiscal Management</u>

The Lao-American Association shall function as a non-profit association and shall support itself by:

1. Membership dues
2. Income from activities
3. Tuition
4. Subsidies and grants
5. Donations

All grants and donations shall be subject to the approval of the Board.

Real property of any kind necessary to carry out the aims and objectives of the Association may be acquired and retained or disposed of by permission of the Board. All Board members serve without remuneration and no member shall be held individually responsible for the financial obligations of the Association.

The Director of the Association shall present to the incoming Board for approval a budget forecast for the forthcoming year.

Article VIII. <u>Meetings, Quorum, and Procedure</u>

1. The Board of Directors shall meet at least once each month. An Annual Meeting of the General Membership is required and shall be held as soon as practicable after the beginning of the calendar year. Special meetings may be called at any time by the President or on the written request of 25% of the regular membership.

2. A quorum at the meetings of the Board of Directors shall consist of half the members of the Board, two of whom must be officers and two of whom must be of a different nationality than the others present.

A quorum at the Annual Meeting of the general membership shall consist of the Regular Members present. At this meeting the members of the new Board shall be presented to the General Membership and the Annual Reports given.

A quorum at a Special Meeting of the General Membership shall consist of the Regular Members present.

ມາດຕາ ໔. <u>ການເຂົ້າເປັນສະມາຊິກ</u>

໑. <u>ສະມາຊິກສາມັນ</u> ໄດ້ແກ່ຜູ້ທີ່ເປັນຄົນລາວ ແລະຄົນອະເມຣິກັນທີ່ມີອາຍຸແຕ່ ໑໘ ປີຂຶ້ນໄປ, ທີ່ໄດ້ຊຳຣະຄ່າເປັນສະມາຊິກແລ້ວ, ທີ່ປາກົນຳແນວທາງ ແລະປາກົຮ່ວມລາຍການກິຈກັມຕ່າງໆຂອງສະມາຄົມ. ສະມາຊິກປະເພດນີ້ມີສິດປ່ອນບັດໃນການເລືອກຕັ້ງໄດ້.

໒. <u>ສະມາຊິກສົມທົບ</u> ໄດ້ແກ່ຄົນສັນຊາດອື່ນ ນອກຈາກລາວ ແລະອະເມຣິກັນ. ສະມາຊິກປະເພດນີ້ກໍໃຫ້ມີອາຍຸ ໑໘ ປີຂຶ້ນໄປ, ໃຫ້ນັບຖືນະໂຍບາຍຂອງສະມາຄົມ, ໃຫ້ເສັຽຄ່າເປັນສະມາຊິກເທົ່າກັບສະມາຊິກສາມັນທົ່ວໄປ, ໃຫ້ເຂົ້າຮ່ວມລາຍການໄດ້ທຸກປະການທີ່ທາງສະມາຄົມຈັດຂຶ້ນ, ເວັ້ນຈາກແຕ່ເປັນກັມມະການບໍຣິຫານ ແລະລົງຄະແນນສຽງບໍ່ໄດ້.

໓. <u>ສະມາຊິກນັກຮຽນ</u> ໄດ້ແກ່ນັກຮຽນທີ່ຍັງຮຽນຢູ່ໃນສະມາຄົມນີ້ ແລະພວກນັກຮຽນເກົ່າທີ່ອອກໄປແລ້ວ, ທີ່ມີອາຍຸບໍ່ເຖິງ ໑໘ ປີ, ທີ່ຍັງສົນໃຈນຳສະມາຄົມຢູ່ ແຕ່ບໍ່ມີສິດທີ່ຈະເຂົ້າເປັນສະມາຊິກສາມັນ ຫຼືສະມາຊິກສົມທົບໄດ້. ສະມາຊິກນັກຮຽນນີ້ບໍ່ມີສິດເປັນກັມມະການບໍຣິຫານ ແລະລົງຄະແນນສຽງບໍ່ໄດ້, ແຕ່ຈະໄດ້ຮັບກຽດອື່ນໆຂອງການເປັນສະມາຊິກ ຕາມແຕ່ຄນະກັມມະການຈະອະນຸມັດໃຫ້. ນັກຮຽນທີ່ຍັງຮຽນຢູ່ໃນສະມາຄົມນີ້ບໍ່ຈຳເປັນເສັຽຄ່າສະມາຊິກ. ສ່ວນພວກນັກຮຽນທີ່ອອກໄປແລ້ວນັ້ນ ຕ້ອງໄດ້ເສັຽຄ່າເປັນສະມາຊິກຕາມແຕ່ທາງຄນະກັມມະການບົ່ງບອກໃຫ້.

໔. ການທີ່ຈະເປັນສະມາຊິກໄດ້ໃນສະມາຄົມນີ້ ແມ່ນແຕ່ຄນະກັມມະການບໍຣິຫານງານຂອງສະມາຄົມເອງທີ່ຈະອະນຸມັດຮັບເອົາ.

ມາດຕາ ໕. <u>ການເລືອກຕັ້ງ ແລະໜ້າທີ່ຂອງຄນະກັມມະການບໍຣິຫານ</u>

໑. ສະມາຊິກນີ້ປະກອບດ້ວຍບຸກຄົນຄນະນຶ່ງເປັນຄນະກັມມະການບໍຣິຫານ ຊຶ່ງຈະຖືກເລືອກແຕ່ງຕັ້ງຂຶ້ນມາຈາກບັນດາສະມາຊິກສາມັນ ຫຼືຈາກບຸກຄົນທີ່ມີຄວາມປະສົງ ແລະມີສິດທີ່ຈະເປັນສະມາຊິກ. ຄນະກັມມະການຈະປະກອບດ້ວຍຄົນລາວ ແລະຄົນອະເມຣິກັນຝ່າຍລະຫົກ (໖) ຄົນໃຫ້ເປັນຈຳນວນເທົ່າກັນ. ນອກນີ້ຍັງຈະເລືອກຕັ້ງເອົາຜູ້ສຳລອງເປັນລຳດັບຜູ້ທີນຶ່ງ ແລະທີສອງໄວ້ຝ່າຍລະສອງ (໒) ຄົນ, ເພື່ອໄວ້ທົດແທນກັນເມື່ອມີຜູ້ໃດຜູ້ນຶ່ງໃນຄນະກັມມະການບໍຣິຫານຫາກລາອອກ. ໃນການປະຊຸມຄັ້ງທຳອິດຫຼັງຈາກມີການເລືອກຕັ້ງແລ້ວ ຄນະກັມມະການຈະຕ້ອງຄັດເລືອກເອົາບຸກຄົນໃນຄນະເອງມາເປັນເຈົ້າໜ້າທີ່ດັ່ງນີ້ຄື :

ປະທານ
ຮອງປະທານ
ເລຂານຸການ
ນາຍຄັງ

໒. <u>ການເລືອກຕັ້ງ</u> ຄນະກັມມະການຈະຖືກເລືອກຕັ້ງກັນເປັນທາງລັບ ໂດຍການສົ່ງບັດເລືອກຕັ້ງທາງຈົດໝາຍກ່ອນການປະຊຸມສະມັດຊາໃຫຍ່ປະຈຳປີ. ການເລືອກນີ້ແມ່ນເລືອກຈາກບັນຊີລາຍຊື່ຂອງຄົນລາວ ແລະຄົນອະເມຣິກັນຝ່າຍລະສິບສອງ (໑໒) ຄົນທີ່ເປັນຜູ້ສະໝັກເພື່ອຮັບໃຊ້ໃນກຳນົດສິບສອງ (໑໒) ເດືອນນັ້ນ. ການເລືອກຕັ້ງທີ່ຈະຖືວ່າເປັນການເລືອກຕັ້ງທີ່ຖືກຕ້ອງໄດ້ ກໍຕໍ່ເມື່ອມີສຽງສນັບສນູນມາຈາກສະ

A quorum at a Special General Meeting to amend the constitution shall consist of 25% of the Regular Members.

Article IX. Amendments

This Constitution may be amended by:

1. having the proposed amendments sent by mail to the entire Regular Membership, accompanied by a form for acceptance or rejection, with a one month's period allowed for consideration. The voting shall be valid only if at least 25% of the Regular Members reply. An affirmative vote of two-thirds of all members voting will constitute approval; or

2. calling a special general meeting after having circulated by mail the proposed amendments, again allowing for one month's consideration, and approval would be constituted by an affirmative vote of two-thirds of Regular Members present and voting.

Amendments to the Constitution are subject to the approval of the Lao Minister of the Interior or his designee and of the American Ambassador or his designee.

Article X. Dissolution

The Association can be dissolved under extraordinary circumstances by the Royal Lao Government; or at a Meeting of the General Membership attended by at least three-quarters of the Regular Members, provided that approval for dissolution is given by at least two-thirds of the members present. A report of the dissolution shall be made to the proper authorities, such as the Ambassador of the United States of America and the Minister of the Interior of the Kingdom of Laos.

The possessions of the Association shall be disposed of as determined by the Minister of the Interior of the Kingdom of Laos and the Ambassador of the United States of America, in consultation with members of the Board of Directors.

ທັມມະນູນ
ຂອງ ສະມາຄົມລາວ-ອະເມຣິກັນ

ລຽບລຽງໃໝ່ໂດຍການປະຊຸມສະມັດຊາໃຫຍ່ປະຈຳປີ ເມື່ອວັນທີ ໗ ກຸມພາ ຄ.ສ. ໑໙໗໐
ເພື່ອແທນທັມມະນູນເກົ່າຄັ້ງເດືອນທັນວາ ຄ.ສ. ໑໙໖໓.

---

ທັມມະນູນນີ້ໄດ້ຖືກຮັບຮອງເຫັນດີ ຈາກພະນະທ່ານເອກອັຄຣາຊທູດຂອງສະຫະຣັດອະເມຣິກາ ເມື່ອວັນທີ ໑໐ ກຸມພາ ຄ.ສ. ໑໙໗໐ ແລະ ໂດຍພະນະທ່ານຣັຖມົນຕຣີກະຊວງມະຫາດໄທ ແຫ່ງ ພຣະຣາຊອານາຈັກລາວ ເມື່ອວັນທີ ໒໐ ກຸມພາ ຄ.ສ. ໑໙໗໐ ແລ້ວຈຶ່ງເລີ້ມນຳອອກປະຕິບັດ.

---

ມາດຕາ ໑. **ຊື່ຂອງສະມາຄົມ**

ສະມາຄົມນີ້ມີຊື່ວ່າ "ສະມາຄົມລາວ-ອະເມຣິກັນ" (ສລອ). ຖ້າເປັນພາສາອັງກິດແມ່ນ "ເດີ ລາວ-ອາເມຣິກັນ ອັດໂຊຊີເອຊັນ" "THE LAO-AMERICAN ASSOCIATION" (LAA).

ມາດຕາ ໒. **ວັດຖຸປະສົງ**

ສະມາຄົມລາວ-ອະເມຣິກັນ (ສລອ) ເປັນສຖາບັນການສຶກສາ ແລະວັທນະທັມຈັດຕັ້ງຂຶ້ນເພື່ອສ້າງສາຍສັມພັນທາງດ້ານຄວາມເຂົ້າໃຈກັນໃຫ້ແໜ້ນໜຽວຍິ່ງຂຶ້ນ ຣະຫວ່າງປະຊາຊົນຢູ່ໃນພຣະຣາຊອານາຈັກລາວ ແລະປະຊາຊົນຢູ່ໃນສະຫະຣັດອະເມຣິກາ. ສະມາຄົມນີ້ບໍ່ມີຈຸດປະສົງເພື່ອຫວັງຜົນກຳໄລ, ບໍ່ກ່ຽວຂ້ອງກັບການເມືອງ ແລະບໍ່ກີດກັ້ນພັກສາສນາຂອງສະມາຊິກ. ລາຍການກິຈກັມປະຈຳປີຂອງສະມາຄົມນີ້ດັ່ງແຈ້ງຕໍ່ໄປນີ້ :

໑. ຈັດໃຫ້ມີລາຍການດ້ານສຶກສາຂຶ້ນ, ໂດຍສະເພາະດ້ານຣຽນພາສາ, ຣຽນຮູ້ວັທນະທັມ, ຣຽນປະວັດສາດ, ຣຽນຮູ້ຫຼັກການຈັດຕັ້ງ ແລະອຸດົມການຂອງລາວ ແລະຂອງສະຫະຣັດ.
໒. ຈັດໃຫ້ມີການກ່າວປາຖະກະຖາ, ການສະແດງສິລປະຕ່າງໆ ການສະແດງດົນຕຣີ, ການກະຈາຍສຽງ, ການສາຍພາພຍົນ ແລະກິຈກັມດ້ານວັທນະທັມ ແລະສິລປະກັມຕ່າງໆ.
໓. ຈັດເຜີຍແຜ່ຈົດໝາຍຂ່າວສານ ທີ ປື້ມຕ່າງໆ.
໔. ສົ່ງເສີມກິຈກັມຂອງສະມາຄົມອື່ນໆ ຊຶ່ງມີຈຸດມຸ່ງໝາຍຄ້າຍຄືກັນ.

ມາດຕາ ໓. **ທີ່ຕັ້ງຂອງສະມາຄົມ**

ສູນກາງໃຫຍ່ຂອງສະມາຄົມລາວ-ອະເມຣິກັນ (ສລອ) ນີ້ຕັ້ງຢູ່ໃນນະຄອນວຽງຈັນ; ເມື່ອໃດພາຫານະຫາກມີພຽງພໍ ແລະ ເຫັນວ່າຈະເປັນການເພາະສົມດີແກ່ດ້ານວັທນະທັມແລ້ວ ກໍອາດຈະຕັ້ງສາຂາຂຶ້ນຢູ່ໃນພາກຕ່າງໆໃນພຣະຣາຊອານາຈັກລາວອີກ. ສາຂາຕ່າງໆເຫຼົ່ານັ້ນຈະຕ້ອງເດີນໄປຕາມຫຼັກຂອງທັມມະນູນສະບັບນີ້ ແລະຢູ່ໃນຄວາມຄຸ້ມຄອງຂອງຄນະກັມມະການບໍຣິຫານສູນກາງໃຫຍ່.